# ຜົນສຳເລັດດ້ານການນຳພາວຽກງານຂອງແມ່ຍິງ ຕໍ່ວຽກງານໂຄງການ ປຊກ ທີ່ນຳພາໂດຍແມ່ຍິງ

ຄືດັ່ງພວກເຮົາຮູ້ນຳກັນແລ້ວວ່າ ຈຳນວນແມ່ຍິງທີ່ເຮັດໜ້າທີ່ເປັນຜູ້ນຳຢູ່ໃນບັນດາປະເທດຕ່າງໆແມ່ນຍັງມີໜ້ອຍ, ລວມທັງຢູ່ ສປປ ລາວ ຂອງພວກເຮົາກໍເຊັ່ນກັນ ຖືວ່າຍັງມີອັດຕາສ່ວນໜ້ອຍພໍສົມຄວນ ໂດຍສະເພາະແມ່ນຜູ້ນຳຊຸມຊົນທີ່ເປັນເພດຍິງ ຊົນເຜົ່າທີ່ບໍ່ແມ່ນລາວໄຕ (Non-Lao Tai) ໃນເຂດຊົນນະບົດຫ່າງໄກສອກຫຼີກ ເຖິງແມ່ນວ່າ ສິດສະເໝີພາບດ້ານບົດບາດຍິງ-ຊາຍ ຈະໄດ້ຮັບການສົ່ງເສີມຢ່າງກວ້າງແລ້ວກໍຕາມ, ທັງນີ້ກໍຍ້ອນວ່າ ເຂົາຍັງມີຂໍ້ຈຳກັດບາງປະການ ເຊັ່ນ: ດ້ອຍການສຶກສາ, ຮີດຄອງປະເພນີບາງຊົນເຜົ່າຍັງກີດຂວາງ, ບັນຫາຄວາມທຸກຍາກ ແລະ ອື່ນໆ ຊຶ່ງເຮັດໃຫ້ເຂົາເຈົ້າສ່ວນໃຫຍ່ຍັງດ້ອຍໂອກາດກວ່າຜູ້ຊາຍ, ບໍ່ກ້າຈະສະແດງອອກຕໍ່ການເຮັດໜ້າທີ່ພາລະບົດບາດໃນການເປັນຜູ້ນຳຊຸມຊົນຢູ່ໃນບ້ານຂອງຕົນໄດ້ຫຼາຍເທົ່າທີ່ຄວນ ແລະ ຄວນໄດ້ຮັບການເພີ່ມທະວີການມີສ່ວນຮ່ວມຂອງເຂົາເຈົ້າໃຫ້ຫຼາຍຂຶ້ນ.

ການເຮັດໜ້າທີ່ພາລະບົດບາດໃນການເປັນຜູ້ນຳຊຸມຊົນຂອງແມ່ຍິງນີ້, ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນດິນຟ້າອາກາດ (ປຊກ) ເປັນໂຄງການໜຶ່ງທີ່ຍົກສູງສິດສະເໝີພາບດ້ານບົດບາດຍິງ-ຊາຍ, ສົ່ງເສີມການມີສ່ວນຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ໂດຍສະເພາະຢູ່ເຂດບ້ານເປົ້າໝາຍໂຄງການ ໂດຍສະໜອງການຝຶກອົບຮົມດ້ານ “ການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ” ໃຫ້ບັນດາການຈັດຕັ້ງບ້ານ ໂດຍສະເພາະແມ່ນຜູ້ທີ່ມີໜ້າທີ່ຮັບຜິດຊອບໃນການເປັນຜູ້ນຳຂອງບ້ານ, ການວາງແຜນພັດທະນາບ້ານ ແລະ ກິດຈະກຳຂອງໂຄງການ ປຊກ, ໃນນັ້ນໄດ້ຄັດເລືອກເອົາ 20 ຄົນ/ບ້ານ ປະກອບມີ: ນາຍບ້ານ/ຮອງນາຍບ້ານ, ຜູ້ອຳນວຍຄວາມສະດວກບ້ານ, ຫົວໜ້າແມ່ຍິງບ້ານ, ຄະນະກຳມະການຄຸ້ມຄອງກອງທຶນກຸ່ມຊ່ວຍເຫຼືອກັນ (ຄບກ), ລວມທັງທີມຈັດຕັ້ງປະຕິບັດວຽກໂຄງລ່າງພື້ນຖານ, ຫົວໜ້າກຸ່ມໂພຊະນາການ, ຄະນະກຳມະການໄກ່ເກ່ຍບ້ານ ແລະ ກຸ່ມຜູ້ຜະລິດ, ຊຶ່ງທັງໝົດເຫຼົ່ານີ້ ລະດົມໃຫ້ມີຈຳນວນແມ່ຍິງເຂົ້າຮ່ວມໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້ ແລະ ເຮັດໜ້າທີ່ພາລະບົດບາດໃນການເປັນຜູ້ນຳຊຸມຊົນບ້ານຂອງເຂົາເຈົ້າ ຊຶ່ງຜູ້ເຂົ້າຮ່ວມຮັບໄດ້ການຝຶກອົບຮົມໃນດ້ານດັ່ງກ່າວ ສາມາດບັນລຸໄດ້ຫຼາຍກວ່າ 60% ທີ່ເປັນເພດຍິງ ແລະ ເຮັດໃຫ້ເຂົາເຈົ້າມີທັກສະຄວາມສາມາດເຮັດໜ້າທີ່ໃນການນຳພາ, ການຄຸ້ມຄອງ ແລະ ການອຳນວຍຄວາມສະດວກຕໍ່ວຽກງານໂຄງການທີ່ຕົນຮັບຜິດຊອບເພີ່ມຂຶ້ນ ແລະ ວຽກສຳເລັດຕາມຄາດໝາຍ.



# 1 ຜົນສຳເລັດຂອງການເປັນນາຍບ້ານເພດຍິງ

*ນາຍບ້ານແມ່ນຜູ້ນຳ ຫຼື ຜູ້ເຮັດໜ້າທີ່ເປັນຫົວໜ້າໃນກົງຈັກການປົກຄອງທ້ອງຖິ່ນຢູ່ຂັ້ນບ້ານ ຊຶ່ງເງື່ອນໄຂ ແລະ ຂະບວນການໄດ້ມາຂອງຜູ້ທີ່ມາເຮັດທີ່ເປັນນາຍບ້ານ ລະຫວ່າງແມ່ຍິງ ແລະ ຜູ້ຊາຍນັ້ນ ແມ່ນບໍ່ມີຄວາມແຕກຕ່າງກັນແຕ່ຢ່າງໃດ ຕາມກົດໝາຍການປົກຄອງທ້ອງຖິ່ນ (ຂັ້ນບ້ານ) ໂດຍຜ່ານຂັ້ນຕອນ-ຂະບວນການຕ່າງໆ ເຊັ່ນ: ເລີ່ມຈາກໄດ້ຮັບການມອບໝາຍໃຫ້ຮັບຜິດຊອບເຮັດໜ້າໃດໜຶ່ງທີ່ນອນໃນຢູ່ໃນໂຄງປະກອບການຈັດຕັ້ງຂອງບ້ານ, ຜ່ານການຮຽນຮູ້, ການຝຶກຝົນຫຼໍ່ຫຼອມຕົນເອງ ແລະ ປະສົບການຈາກການເຮັດວຽກຕົວຈິງ, ມີຄວາມສາມາດດ້ານການນຳພາ, ມີຜົນສຳເລັດ ຫຼື ຜົນງານໂດຍແທ້, ຖືກສະເໜີລາຍຊື່ເຂົ້າຮັບການເລືອກຕັ້ງເປັນຄະນະບ້ານ ແລະ ສຸດທ້າຍກໍແມ່ນຊະນະການເລືອກດ້ວຍຄະແນນສຽງສູງສຸດຈາກປະຊາຊົນໃນບ້ານ ໃຫ້ເຮັດໜ້າທີ່ເປັນນາຍບ້ານ/ຜູ້ນຳບ້ານ ຕາມແຕ່ລະສະໄໝການເລືອກຕັ້ງ.

*ສຳລັບແມ່ຍິງຜູ້ທີ່ໄດ້ຮັບການເລືອກຕັ້ງໃຫ້ເປັນນາຍບ້ານຢູ່ບ້ານເປົ້າໝາຍຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນດິນຟ້າອາກາດ (ປຊກ) ກໍມີເຊັ່ນກັນ, ແຕ່ກໍມີຈຳນວນໜ້ອຍເຊັ່ນ: ຈຳນວນບ້ານເປົ້າໝາຍໂຄງການ ໃນຊຸດທີ-1 ຜ່ານມາ ລວມທັງໝົດມີ 230 ບ້ານ, ໃນນີ້ມີພຽງ 4 ບ້ານ (4 ຄົນ) ຫຼື ເທົ່າກັບ 1.73% ເທົ່ານັ້ນທີ່ນາຍບ້ານເປັນເພດຍິງ. ແນວໃດກໍດີ, ກໍຍັງມີແມ່ຍິງຈຳນວນໜຶ່ງເຊັ່ນກັນທີ່ເຮັດໜ້າເປັນຮອງນາຍບ້ານ ຫຼື ຄະນະບ້ານ ມີເຖິງ 14 ຄົນ ເທົ່າກັບ 7.82% ຊຶ່ງເຂົາເຈົ້າເຫຼົ່ານີ້ ຖືວ່າເຮັດໜ້າທີ່ເປັນການນຳ/ຜູ້ນຳຂອງບ້ານເຊັ່ນກັນ. ການເຮັດໜ້າທີ່ຂອງບັນດາແມ່ຍິງທີ່ເປັນນາຍບ້ານ ເວົ້າລວມແລ້ວ ກໍແມ່ນປະຕິບັດຕາມກົດໝາຍການປົກທ້ອງຖິ່ນ ບໍ່ແຕກຕ່າງຫຍັງຄືກັບບັນດານາຍບ້ານທີ່ເປັນເພດຊາຍ ແລະ ແຕ່ລະບ້ານກໍມີການແຂ່ງຂັນກັນສ້າງຜົນງານນຳພາສ້າງສາພັດທະນາບ້ານຂອງໃຜລາວ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເປັນກ້າວໆ ແລະ ເຮັດໃຫ້ບ້ານຂອງຕົນຫຼຸດພົ້ນອອກຈາກສະຖານະພາບບ້ານທຸກຍາກ ຕາມເປົ້າໝາຍຂອງພັກ ແລະ ລັດຖະບານທີ່ໄດ້ກຳນົດໄວ້.

*ການສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ກໍແມ່ນວຽກສຳຄັນຕົ້ນຕໍໜຶ່ງຢູ່ໃນແຜນດຳເນີນງານໂຄງການ ປຊກ, ຊຶ່ງໃນນີ້ໂຄງການ ໄດ້ສະໜອງການຝຶກອົບຮົມ ກ່ຽວກັບ "ການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າ" ໃຫ້ແກ່ການຈັດຕັ້ງບ້ານ ຜູ້ທີ່ມີໜ້າທີ່ຮັບຜິດຊອບໃນກິດຈະກຳໂຄງການ ປຊກ ໂດຍເນັ້ນໜັກການສົ່ງເສີມການມີສ່ວນຮ່ວມ ແລະ ສ້າງຄວາມເຂັ້ມແຂງໃຫ້ກຸ່ມແມ່ຍິງເຂົ້າໃນການວາງແຜນພັດທະນາບ້ານ, ຝຶກທັງໝົດ 230 ບ້ານ ຂອງບ້ານຊຸດທີ-1 ນັບແຕ່ທ້າຍປີ 2024 ເປັນຕົ້ນມາ ຊຶ່ງເປັນໂອກາດອັນດີໃຫ້ຜູ້ທີ່ເຮັດໜ້າທີເປັນນາຍບ້ານ ຫຼື ການນຳຂອງບ້ານທີ່ເປັນເພດຍິງຕໍ່ກັບການຍົກລະດັບທັກສະດ້ານການເປັນຜູ້ນຳຊຸມຊົນ ກໍຄືການນຳຂອງບ້ານເຂົາເຈົ້າ.

## ການຈັດກອງປະຊຸມ ຂອງບາງນາຍບ້ານທີ່ເປັນເພດຍິງ ເຂົ້າໃນການວາງແຜນພັດທະນາບ້ານແບບມີສ່ວນຮ່ວມ





***ຜົນສຳເລັດ:*** ຫຼັງຈາກໂຄງການ ປຊກ ໄດ້ຝຶກອົບຮົມດ້ານການເປັນຜູ້ນຳໃຫ້ແລ້ວ ແລະ ຜ່ານການເຄື່ອນໄຫວນຳພາວຽກງານຕົວຈິງຂອງນາຍບ້ານເພດຍິງເຫຼົ່ານີ້ ເຫັນໄດ້ເຖິງຜົນສຳເລັດໃນການນຳພາ ມີຄື:

- ຂີດຄວາມສາມາດດ້ານການນຳພາຂອງເຂົາເຈົ້າເພີ່ມຂຶ້ນ ສະແດງອອກໃນການຈັດກອງປະຊຸມວາງແຜນພັດທະນາບ້ານ, ການມີສ່ວນຮ່ວມຂອງທຸກພາກສ່ວນຫຼາຍຂຶ້ນ ໂດຍສະເພາະຈາກກຸ່ມແມ່ຍິງ ແລະ ມີຜົນສຳເລັດ ບ້ານໄດ້ຮັບການພັດທະນາຕາມແຜນ;
- ບົດບາດຂອງແມ່ຍິງໃນສັງຄົມຕໍ່ການເຮັດໜ້າທີ່ເປັນນາຍບ້ານ/ເປັນຜູ້ນຳບ້ານ ໄດ້ຮັບການສົ່ງເສີມກວ້າງຂວາງຫຼາຍຂຶ້ນ;
- ເປັນແບບຢ່າງໃຫ້ບ້ານອື່ນໆວ່າ ແມ່ຍິງກໍສາມາດເປັນນາຍບ້ານໄດ້ຊຶ່ງບໍ່ແຕກຕ່າງກັບເພດຊາຍ ແລະ ເປັນສິ່ງຈູງໃຈໃຫ້ກຸ່ມແມ່ຍິງຢາກເຮັດໜ້າທີ່ເປັນນາຍບ້ານຫຼາຍຂຶ້ນໃນຕໍ່ໜ້າ.

***ສະຫຼຸບ:*** ເຖິງວ່າແມ່ຍິງທີ່ເປັນນາຍບ້ານຈະມີຈຳນວນໜ້ອຍ, ແຕ່ການເຮັດໜ້າເປັນຜູ້ນຳຂອງເຂົາເຈົ້າ ຢູ່ໃນບ້ານເປົ້າໝາຍໂຄງການ ປຊກ ກໍບໍ່ດ້ອຍກວ່າຜູ້ຊາຍແຕ່ຢ່າງໃດ ແລະ ການນຳພາປະສົບຜົນສຳເລັດຄືກັນ.

## ຜົນສຳເລັດຂອງການເຮັດໜ້າທີ່ເປັນຜູ້ອຳນວຍຄວາມສະດວກບ້ານເພດຍິງ

*ການເຮັດວຽກງານໃນດ້ານຕ່າງໆ ແມ່ນອນໃນທຸກຂັ້ນກໍມີການຮ່ວມມື, ການປະສານງານ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍສະເພາະກັບພາກສ່ວນກ່ຽວຂ້ອງ ແມ່ນມີການປະສານສົມທົບກັນ ເພື່ອໃຫ້ວຽກງານບັນລຸຕາມເປົ້າໝາຍທີ່ກຳນົດໄວ້. ການເຮັດວຽກພັດທະນາຊຸມຊົນກໍເຊັ່ນກັນ ມີການຮ່ວມມື ແລະ ການປະສານສົມທົບກັບພາກສ່ວນກ່ຽວຂ້ອງຕາມຂອບເຂດຄວາມຮັບຜິດຊອບຂອງຜູ້ທີ່ໄດ້ຮັບມອບໝາຍແຕ່ລະຄົນ. ສຳລັບໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ກໍເປັນໂຄງການໜຶ່ງທີ່ເຮັດວຽກປະກອບສ່ວນແກ້ໄຂຊ່ວຍຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ໂດຍສະເພາະໃນບັນດາບ້ານທີ່ຍັງທຸກຍາກ ຂອງ ສປປ ລາວ, ຊຶ່ງໂຄງປະກອບການຈັດຕັ້ງປະຕິບັດຂອງໂຄງການ ແມ່ນມີເຄືອຂ່າຍການປະສານງານ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ລົງຮອດຂັ້ນບ້ານ ໂດຍອີງໃສ່ບົດຮຽນທີ່ຖອດຖອນໄດ້ ຈາກການຈັດຕັ້ງປະຕິບັດໂຄງການຂອງກອງທຶນຫຼຸດຜ່ອນຄວາມທຸກຍາກ ໃນແຕ່ລະໄລຍະຜ່ານມາ.

*ເພື່ອເຮັດໃຫ້ຂອດປະສານງານຂອງໂຄງການ ປຊກ ຢູ່ໃນຂັ້ນຊຸມຊົນກໍຄືຂັ້ນບ້ານ ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ ຈຶ່ງໄດ້ກຳນົດໃຫ້ມີຜູ້ອຳນວຍຄວາມສະດວກຂັ້ນບ້ານ ຢູ່ໃນບ້ານເປົ້າໝາຍໂຄງການ ຊຶ່ງໄດ້ກຳນົດເອົາບ້ານລະ 1 ຄົນ. ສຳລັບບ້ານເປົ້າໝາຍໂຄງການໃນຊຸດທີ-1 ແມ່ນມີຈຳນວນທັງໝົດ 230 ບ້ານ (230 ຄົນ), ໃນນີ້ເປັນຍິງ 88 ຄົນ ເທົ່າກັບ 38.26%, ຊຶ່ງເຂົາເຈົ້າ ແມ່ນເຮັດໜ້າທີ່ເປັນໃຈກາງໃນການປະສານງານ ແລະ ອຳນວຍຄວາມສະດວກວຽກໂຄງການ ຕາມການມອບໝາຍ ລະຫວ່າງ ການຈັດຕັ້ງບ້ານ ແລະ ກັບພະນັກງານໂຄງການ ປຊກ ທີ່ປະຈຳຢູ່ຂັ້ນບ້ານ, ໂດຍຫຼັກໆແລ້ວ ແມ່ນວຽກປັບປຸງຊີວິດການເປັນຢູ່ ແລະ ສົ່ງເສີມໂພຊະນາການຊຸມຊົນ. ພ້ອມດຽວກັນ, ເຂົາເຈົ້າກໍມີບົດບາດ ຫຼື ມີສ່ວນຮ່ວມເຂົ້າໃນການນຳພາວຽກງານໂຄງການຂອງບ້ານ ແລະ ໄດ້ຖືກກຳນົດໃຫ້ເຂົ້າຮ່ວມຮັບການຝຶກອົບຮົມກ່ຽວກັບການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ ຈາກໂຄງການນຳອີກດ້ວຍ ຊຶ່ງເຮັດໃຫ້ເຂົາເຈົ້າມີທັກສະດ້ານການເປັນຜູ້ນຳ ແລະ ທັກສະການອຳນວຍຄວາມສະດວກຕໍ່ວຽກງານໂຄງການ ປຊກ ຢ່າງມີແບບແຜນທີ່ດີ ແລະ ສາມາດປະຕິບັດໄດ້.

*ຜູ້ອຳນວນຄວາມສະດວກບ້ານ ຍັງມີບົດບາດສະເພາະ ຄື: ເປັນຂົວຕໍ່ລະຫວ່າງ ພະນັກງານໂຄງການ ປຊກ ທີ່ປະຈຳຢູ່ຂັ້ນບ້ານ, ກຸ່ມຊ່ວຍເຫຼືອກັນ (ກຊກ) ແລະ ກຸ່ມໂພຊະນາການ ໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆທີ່ທາງໂຄງການສະໜັບສະໜູນ; ເປັນຜູ້ສ້າງຄວາມເຊື່ອໝັ້ນ ແລະ ຊຸກຍູ້ໃຫ້ສະມາຊິກກຸ່ມມີຄວາມຫ້າວຫັນໃນການເຂົ້າຮ່ວມກິດຈະ - ກຳ; ເປັນຜູ້ຕິດຕາມຄວາມຄືບໜ້າການຈັດຕັ້ງປະຕິບັດກິດຈະກຳຂອງສະມາຊິກກຸ່ມ ກຊກ ແລະ ກຸ່ມໂພຊະນາການບ້ານ ທັງເປັນຜູ້ບັນທຶກຂໍ້ມູນເພື່ອລາຍງານໃຫ້ແກ່ພະນັກງານ ປຊກ ຂັ້ນບ້ານ ກ່ຽວກັບຄວາມຄືບໜ້າຂອງແຕ່ລະກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດໄປແຕ່ລະໄລຍະ, ບັນຫາ ຫຼື ສິ່ງທ້າທາຍ ແລະ ສະເໜີວິທີການແກ້ໄຂ; ແລະ ສຸດທ້າຍ ແມ່ນເປັນຜູ້ທີ່ມີບົດບາດສຳຄັນຕໍ່ການດຳເນີນກິດຈະກຳຂອງສະມາຊິກກຸ່ມ ແລະ ຄວາມຍືນຍົງຂອງກິດຈະກຳສ້າງລາຍຮັບ ແລະ ກິດຈະກຳທີ່ກ່ຽວຂ້ອງອື່ນໆຂອງໂຄງການ ຢ່າງມີຄວາມຮັບຜິດຊອບ & ເປັນປົກກະຕິ.

### ຮູບພາບຂອງຜູ້ອຳນວຍຄວາມສະດວກບາງບ້ານເພດຍິງທີ່ມີທັກສະ, ຫ້າວຫັນຕໍ່ວຽກງານ & ເປັນແບບຢ່າງທີ່ດີໄດ້



***ຜົນສຳເລັດ:** ຜ່ານການເຮັດວຽກຕົວຈິງຜູ້ອຳນວຍຄວາມສະດວກບ້ານເພດຍິງເຫຼົ່ານີ້, ເວົ້າສະເພາະກໍແມ່ນກັບໂຄງການ ປຊກ ຢູ່ໃນບ້ານເປົ້າໝາຍໂຄງການ ຊຸດທີ-1 ຜ່ານມາ ເຫັນໄດ້ວ່າ ເຂົາເຈົ້າທັງເຮັດ-ທັງຮຽນຮູ້ຈາກການເຮັດວຽກຕົວຈິງໄປນຳ & ມີຜົນສຳເລັດພົ້ນເດັ່ນ ຄື:

- ເຂົາເຈົ້າ ສາມາດເຮັດສຳເລັດໜ້າທີ່ຕາມການມອບໝາຍ ບໍ່ແຕກຕ່າງກັບຜູ້ອຳນວຍຄວາມສະດວກບ້ານທີ່ເປັນເພດຊາຍ;
- ສາມາດເປັນແບບຢ່າງທີ່ດີໃຫ້ແກ່ແມ່ຍິງລຸ້ນໜຸ່ມນ້ອຍໃນການປະກອບສ່ວນເຂົ້າໃນການພັດທະນາຊຸມຊົນ/ບ້ານຂອງຕົນໄດ້;
- ຈຳນວນໜຶ່ງ ແມ່ນມີທ່າແຮງ ແລະ ມີຄວາມອາດສາມາດສືບທອດເປັນຜູ້ນຳທີ່ເຂັ້ມແຂງຂອງບ້ານໃນຕໍ່ໜ້າໄດ້;
- ຊີວິດການເປັນຢູ່ຂອງປະຊາຊົນໃນບ້ານເປົ້າໝາຍ ໄດ້ຮັບການປັບປຸງໃຫ້ດີຂຶ້ນ ໂດຍການສະໜັບສະໜູນຈາກໂຄງການ ປຊກ ແລະ ການເຮັດໜ້າທີ່ຂອງຜູ້ອຳນວຍຄວາມສະດວກບ້ານເຫຼົ່ານີ້.

*“ຝຶກຝົນໄວ້ໃນວັນນີ້ ສາມາດເປັນຜູ້ສືບທອດທີ່ດີໃນວັນໜ້າ”*

# 3 ຜົນສຳເລັດຂອງການເຮັດໜ້າທີ່ເປັນຜູ້ນຳກຸ່ມໂພຊະນາການຊຸມຊົນ

*ວຽກງານສົ່ງເສີມໂພຊະນາການ ແລະ ພັດທະນາຊຸມຊົນ ແມ່ນອົງປະກອບໜຶ່ງຂອງໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ແລະ ຢູ່ໃນແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຫຼາຍຂະແໜງການ, ເຊິ່ງພາລະກິດຫຼັກຂອງວຽກໂພຊະນະການ ພາຍໃຕ້ແຜນດຳເນີນງານຂອງໂຄງການ ປຊກ ຄືການແກ້ໄຂບັນຫາການຂາດອາຫານທີ່ມີໂພຊະນາການຢ່າງຍືນຍົງ ໂດຍສຸມໃສ່ ຊ່ວງເວລາ 1,000 ວັນທຳອິດຂອງຊີວິດ (ນັບຕັ້ງແຕ່ເລີ່ມຕັ້ງທ້ອງຖືພາ ຈົນເຖິງອາຍຸ 2 ປີ) ເຊິ່ງເປັນພື້ນຖານສຳຄັນທີ່ສຸດຕໍ່ການພັດທະນາສະໝອງ ແລະ ຮ່າງກາຍຂອງເດັກນ້ອຍ. ຂໍ້ມູນຈາກຜົນການສຳຫຼວດຄັ້ງຫຼ້າສຸດຜ່ານມາ ໄດ້ລະບຸໄວ້ວ່າ ໃນພື້ນທີ່ເຂດຊົນນະບົດຫ່າງໄກສອກຫຼີກ ຂອງ ສປປ ລາວ ຈຳນວນເດັກທີ່ມີອາຍຸຕ່ຳກວ່າ 5 ປີ ລົງມາ ແມ່ນປະສົບກັບພາວະຂາດສານອາຫານຊໍາເຮື້ອ (stunting) ເຖິງ 2 ໃນ 5 ຄົນ, ຊຶ່ງເຫັນວ່າ ອັດຕາສ່ວນດັ່ງກ່າວແມ່ນສູງພໍສົມຄວນ ແລະ ຄວນໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນເທື່ອລະກ້າວ.

*ຕໍ່ກັບບັນຫາດັ່ງກ່າວ, ໂຄງການ ປຊກ ໄດ້ວາງແນວທາງທີ່ສຳຄັນຕົ້ນຕໍເພື່ອປັບປຸງແກ້ໄຂຕໍ່ການດຳເນີນງານ ຄືການສ້າງຕັ້ງກຸ່ມໂພຊະນະການຊຸມຊົນຂຶ້ນ (ກພຊ/CNG) ທີ່ເປັນກົນໄກການຮຽນຮູ້ຜ່ານສື່ວິດີໂອ, ການສາທິດການປຸງອາຫານ ແລະ ການປູກພືດສວນຄົວ ເຫຼົ່ານີ້ເປັນຕົ້ນ. ໂຄງການ ໄດ້ໃຫ້ຄວາມສຳຄັນຕໍ່ການມີສ່ວນຮ່ວມຂອງຊຸມຊົນ ທັງດ້ານແຮງງານ, ວັດຖຸດິບ, ແລະການບໍລິຫານງົບປະມານ ເພື່ອໃຫ້ເກີດການປ່ຽນແປງຢ່າງຍືນຍົງ ອັນສົ່ງຜົນຕໍ່ຄວາມສຳເລັດທາງດ້ານການສຶກສາ ແລະ ໂອກາດທາງເສດຖະກິດຂອງປະຊາກອນໃນອະນາຄົດ. ການດຳເນີນງານດັ່ງກ່າວ, ແມ່ນຢູ່ພາຍໃຕ້ການນຳພາຂອງຄະນະກຳມະການກຸ່ມ ປະກອບດ້ວຍ 4 ທ່ານ ຄື: ຫົວໜ້າ, ຮອງຫົວໜ້າ, ຜູ້ບັນທຶກບັນຊີ, ແລະ ຜູ້ຮັບຜິດຊອບຄັງເງິນສົດ (ເປັນຍິງ 100%) ເຊິ່ງຄັດເລືອກຈາກເງື່ອນໄຂສຳຄັນ ຄື: ມີຄວາມສະໝັກໃຈ, ອ່ານອອກ-ຂຽນໄດ້, ແລະ ໄດ້ຮັບການຍອມຮັບຈາກສະມາຊິກກຸ່ມ. ສຳລັບບ້ານເປົ້າໝາຍໂຄງການ ປຊກ ໃນຊຸດທີ-1 ຈຳນວນ 230 ບ້ານ, ສ້າງຕັ້ງ ກພຊ ໄດ້ 321 ກຸ່ມ ຕາມຂະໜາດຂອງບ້ານນ້ອຍ ແລະ ໃຫຍ່ (ນັບແຕ່ 1 ກຸ່ມ ເຖິງ 4 ກຸ່ມ/ບ້ານ), ມີສະມາຊິກທັງໝົດ 9,065 ຄົນ (ຍິງ 6,810 ຄົນ ເທົ່າກັບ 75%).

*ຄະນະກຳມະການ ກພຊ ດັ່ງກ່າວ, ເຂົາເຈົ້າໄດ້ເອົາໃຈໃສ່ນຳພາສະມາຊິກກຸ່ມຂອງໃຜລາວ ຕາມພາລະບົດບາດທີ່ໄດ້ຮັບມອບໝາຍດຳເນີນກິດຈະກຳໂພຊະນາການຢູ່ໃນບ້ານຂອງຕົນຢ່າງເປັນຂະບວນຟົດຟື້ນ ແລະ ເປັນປົກກະຕິ. ພ້ອມດຽວກັນ, ບັນດາສະມາຊິກກຸ່ມ ກໍໄດ້ມີສ່ວນຮ່ວມ ແລະ ພ້ອມກັນເອົາໃຈໃສ່ປະຕິບັດຕາມຫຼັກວິຊາການຂອງວຽກໂພຊະນາການ ເຊິ່ງຕະຫຼອດໄລຍະການດຳເນີນກິດຈະກຳໃນບ້ານເປົ້າໝາຍຊຸດທີ-1 ນີ້ ເຂົາເຈົ້າສາມາດບັນລຸໄດ້ ຄື: ຈັດກອງປະຊຸມປຶກສາຫາລື ກ່ຽວກັບວຽກໂພຊະນາການໄດ້ທັງໝົດ 4.062 ເທື່ອ; ຈັດການແຕ່ງກິນທັງໝົດ 4.062 ເທື່ອ; ແລະ ຜະລິດຜົງອາຫານໄດ້ທັງໝົດ 15.945,3 Kg. ທັງໝົດນີ້, ເປັນໝາກຜົນສຳຄັນທີ່ທາງຄະນະ ກພຊ ສາມາດປະຕິບັດໄດ້ ແລະ ໄດ້ຮັບການເສີມຂະຫຍາຍຕໍ່ໄປ.

**ຂະບວນການແຕ່ງກິນດ້ວຍອາຫານທີ່ມີໂພຊະນາການຂອງ ກພຊ ສຳລັບເດັກນ້ອຍກຸ່ມຄອບຄົວ 1,000 ວັນ ຢ່າງເປັນຂະບວນຟົດຟື້ນ**





***ຜົນສຳເລັດ:** ຜ່ານການຈັດຕັ້ງປະຕິບັດການແກ້ໄຂບັນຫາການຂາດອາຫານທີ່ມີໂພຊະນາການຂອງບ້ານເປົ້າໝາຍໂຄງການ ປຊກ ໃນຊຸດທີ-1 ໂດຍການເຮັດໜ້າທີ່ນຳພາຂອງຄະນະກຳມະການ/ຄະນະນຳພາ ກຸ່ມໂພຊະນາການຊຸມຊົນເຫຼົ່ານີ້ ໂດຍການສະໜັບສະໜູນຂອງໂຄງການ ປຊກ ເຫັນວ່າ ມີຜົນສຳເລັດໄດ້ ຄື:

- ວຽກສົ່ງເສີມໂພຊະນາການຊຸມຊົນຢູ່ໃນບັນດາບ້ານເປົ້າໝາຍໂຄງການ ປຊກ ຊຸດທີ-1 ປະສົບຜົນສຳເລັດຕາມແຜນການທີ່ກຳນົດໄວ້;
- ບັນຫາການຂາດອາຫານທີ່ມີໂພຊະນາການຂອງ ກພຊ ຢູ່ໃນບ້ານເປົ້າໝາຍ ໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນ ແລະ ສາມາດສືບຕໍ່ນຳໄປເສີມຂະຫຍາຍໄປຍັງບ້ານອື່ນໆໄດ້ໃນຕໍ່ໜ້າ;
- ເປັນແບບຢ່າງທີ່ດີດ້ານການນຳພາກຸ່ມເຄື່ອນໄຫວເຮັດສຳເລັດໜ້າທີ່ເປັນຄະນະກຳມະການ ກພຊ ໃຫ້ແກ່ບ້ານອື່ນໆຕໍ່ໄປ;
- ອາຫານທີ່ມີໂພຊະນາການຂອງກຸ່ມຄອບຄົວ 1,000 ວັນ ໄດ້ຮັບການສົ່ງເສີມ, ມີຄວາມຫຼາກຫຼາຍ ແລະ ເຮັດການຈະເລີນເຕີບໂຕຂອງເດັກນ້ອຍນັບມື້-ນັບດີຂຶ້ນ, ເຊິ່ງຖືວ່າ ການນຳພາຂອງຄະນະກຳມະການກຸ່ມໂພຊະນາການດັ່ງກ່າວ ມີຜົນສຳເລັດໄດ້ໂດຍແທ້.

*"ອາຫານທີ່ມີໂພຊະນາການໃຫ້ ເດັກນ້ອຍເຕີບໂຕສົດໃສໃນວັນໜ້າ"*

*ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ (ປຊກ) ມີບ້ານເປົ້າໝາຍຈຳນວນທັງໝົດ 450 ບ້ານ ຢູ່ໃນ 14 ເມືອງ (ຍອດອູ, ຜົ້ງສາລີ, ປາກແບງ, ງາ, ແອດ, ກວັນ, ໜອງແຮດ, ພູກູດ, ເຊໂປນ, ໜອງ, ຕະໂອ້ຍ, ສະໝ້ວຍ, ດາກຈຶງ ແລະ ດາກຈຶງ) ຂອງ 07 ແຂວງ ໃນ ສປປ ລາວ ໃນນັ້ນມີ: ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ. ຈຸດປະສົງຕົ້ນຕໍໜຶ່ງຂອງໂຄງການ ກໍແມ່ນເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນຜູ້ທຸກຍາກຂາດເຂີນໃນເຂດຊົນນະບົດຫ່າງໄກສອກຫຼີກໃຫ້ດີຂຶ້ນກວ່າເກົ່າ ກ້າວໄປສູ່ການຫຼຸດພົ້ນອອກຈາກຖານະຄວາມທຸກຍາກໄດ້ໃນຕໍ່ໜ້າ ໂດຍເນັ້ນໃສ່ແກ້ໄຂສາເຫດການຂາດປັດໃຈພື້ນຖານທາງດ້ານຊີວິດການເປັນຢູ່ ແລະ ເຮັດໃຫ້ເຂົາເຈົ້າບໍ່ສາມາດຫຼຸດພົ້ນອອກຈາກຄວາມທຸກຍາກໄດ້ ເຊັ່ນ: ຂາດເຂີນອາຫານທີ່ມີໂພຊະນາການອາຫານ, ທີ່ພັກອາໄສທີ່ແໜ້ນໜາຖາວອນ, ຂາດເຂີນເຄື່ອງນຸ່ງຫົ່ມ, ຢາປິ່ນປົວພະຍາດ ແລະ ຂາດຄວາມຮູ້ພື້ນຖານໃນດ້ານຕ່າງໆທີ່ຈະຊ່ວຍໃຫ້ເຂົາເຈົ້າ ສາມາດຫຼຸດພົ້ນອອກສະພາບຈາກຄວາມທຸກຍາກໄດ້.

*ເພື່ອແກ້ໄຂບັນຫາຄວາມທຸກຍາກດັ່ງກ່າວ, ໂຄງການ ປຊກ ໄດ້ສົ່ງເສີມການສ້າງຕັ້ງກຸ່ມຢູ່ໃນບັນດາບ້ານເປົ້າໝາຍ, ການຝາກເງິນຂອງກຸ່ມ ແລະ ສະໜອງການຝຶກອົບຮົມ ກ່ຽວກັບເຕັກນິກການປູກ-ການລ້ຽງທີ່ສາມາດປັບຕົວກັບການປ່ຽນແປງຂອງສະພາບດິນຟ້າອາກາດໄດ້, ລວມທັງການສ້າງແຜນທຸລະກິດຄອບຄົວ. ສຳລັບການສ້າງຕັ້ງກຸ່ມ, ໂຄງການ ໄດ້ສ້າງຕັ້ງກຸ່ມຊ່ວຍເຫຼືອກັນ (ກຊກ) ຢູ່ໃນບ້ານເປົ້າໝາຍໂຄງການ ຊຸດທີ-1 ໄດ້ຈຳນວນ 851 ກຸ່ມ ເຊິ່ງໃນນີ້ມີລະຫວ່າງ 2 ກຸ່ມ ເຖິງ 4 ກຸ່ມຕໍ່ບ້ານ ຕາມຈຳນວນປະຊາກອນຜູ້ທຸກຍາກຂອງບ້ານ, ມີສະມາຊິກທັງໝົດ 11,933 ຄົນ (ຍິງ 11,063 ຄົນ ເທົ່າກັບ 92.7%). ເພື່ອໃຫ້ການຄຸ້ມຄອງກຸ່ມດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນ, ໂຄງການ ໄດ້ສ້າງຕັ້ງຄະນະກຳມະການບໍລິຫານຄຸ້ມຄອງກອງທຶນກຸ່ມຊ່ວຍເຫຼືອກັນ (ຄບກ) ໃນຈຳນວນ 230 ບ້ານເປົ້າ ໝາຍໂຄງການຊຸດທີ-1, ມີສະມາຊິກທັງໝົດ 1,604 ຄົນ (ຍິງ 1,134 ຄົນ ເທົ່າ 70.7%) ໃນນີ້ຜູ້ທີ່ເປັນປະທານ/ຜູ້ນຳ ຄບກ ທີ່ເປັນເພດຍິງມີເຖິງ 75 ຄົນ ເທົ່າກັບ 32.61%. ພ້ອມດຽວກັນ, ຄະນະດັ່ງກ່າວ ຍັງໄດ້ຮັບການຝຶກອົບຮົມດ້ານການຄຸ້ມຄອງກອງທຶນ ຕາມຫຼັກວິຊາການຄຸ້ມຄອງການເງິນຈຸລະພາກ, ລວມທັງໄດ້ຮັບການຝຶກອົບຮົມດ້ານການເປັນຜູ້ນຳຂັ້ນຮາກຖານເພື່ອການພັດທະນາໂດຍຊຸມຊົນເປັນເຈົ້າການ ຊຶ່ງເຮັດໃຫ້ລະຂີດຄວາມສາມາດດ້ານການນຳພາວຽກງານຂອງເຂົາເຈົ້າ ໄດ້ຮັບການປັບປຸງຍົກລະດັບສູງຂຶ້ນ ໂດຍສະເພາະໃນຂອບເຂດຄວາມຮັບຜິດຊອບ ກໍຄືການຄຸ້ມຄອງກອງທຶນກຸ່ມຊ່ວຍເຫຼືອກັນຂອງບ້ານ.

***ຜົນສຳເລັດ:*** ຜ່ານການເຄື່ອນໄຫວເຮັດໜ້າທີ່ເປັນປະທານ ຄບກ ທີ່ເປັນເພດຍິງຂອງບ້ານເປົ້າໝາຍໂຄງການຊຸດທີ-1 ຜ່ານມາ, ທັງໄດ້ຮັບການສະໜັບສະໜູນເງິນຕົ້ນທຶນ ແລະ ດ້ານວິຊາການ, ລວມທັງບົດຮຽນດ້ານການນຳພາຈາກໂຄງການ ເຫັນວ່າ ມີຜົນສຳເລັດ ດັ່ງລຸ່ມນີ້:

- ສາມາດນຳພາ ແລະ ບໍລິຫານ-ຄຸ້ມຄອງກອງທຶນກຸ່ມຊ່ວຍເຫຼືອກັນຂອງບ້ານ ໄດ້ຮັບຜົນຕາມລະດັບຄາດໝາຍທີ່ກຳນົດໄວ້;
- ເງິນຕົ້ນທຶນທີ່ທາງໂຄງການ ສະໜອງໃຫ້ແກ່ກຸ່ມ ຖືກນຳໄປໃຊ້ລົງທຶນເຂົ້າໃນການເຮັດການຜະລິດປູກຝັງ-ລ້ຽງສັດ ຕາມຈຸດປະສົງ ແລະ ໄດ້ຮັບການນຳພາ-ຕິດຕາມຈາກ ຄບກ ເປັນໄປຕາມລະບຽບຫຼັກການ;
- ສາມາດລະດົມເງິນຝາກຂອງກຸ່ມ ເຮັດໃຫ້ຈຳນວນເງິນຝາກ ມີການຂະຫຍາຍໂຕເພີ່ມຂຶ້ນ ແລະ ສະມາຊິກກຸ່ມ ສາມາດຊ່ວຍເຫຼືອກັນໄດ້;
- ເປັນແບບຢ່າງທີ່ດີໃຫ້ບ້ານທຸກຍາກອື່ນໆໄດ້ ແລະ ຜົນສຳເລັດກໍບໍ່ດ້ອຍກວ່າການນຳພາຂອງປະທານ ຄບກ ທີ່ເປັນຜູ້ຊາຍແຕ່ຢ່າງໃດ.



*ສູ້ຊົນເຮັດໃຫ້ຄອບຄົວຂອງຕົນພົ້ນທຸກ*



